## ບົດທີ 14

# ຄຳອຸປະມາເລື່ອງເງິນຕາລັນຕົນ (ຫຼຽນ)

ຮູບທັງ 4 ແຜ່ນຕໍ່ໄປນີ້ສະແດງເຖິງຄົນທີ່ເອົາຊື່ວ່າເປັນຄຣິດສະຕຽນທັງ 4 ຄົນ. ບາງຄົນມີຄຸນນະພາບທີ່ມີຄຸນຄ່າໃນສາຍຕາຂອງພະເຈົ້າແລະບາງຄົນບໍ່ມີ. ໃນຄຳອຸປະມາຕໍ່ໄປນີ້ ເຮົາຈະຮຽນຮູ້ເລື່ອງ:




ຮູບຂອງຖາວອນ




ຮູບຂອງແກ້ວ




ຮູບຂອງພູວົງ




ຊື່ຄານ

**1** ກ. ໃນຫຼັກສູດມັດທາຍ ເຫຼັ້ມທີ 5 ນີ້ ເຮົາສຶກສາມາເລື່ອງເຫດການຕ່າງໆ ໃນອາທິດສຸດທ້າຍ ກ່ອນທີ່ພະອົງຈະຕາຍ. ໃນອາທິດນັ້ນພະອົງເທດສະໜາຢູ່ບ່ອນໃດ? ______________

ຂ. ແມ່ນສອງບົດໃດໃນຂ່າວປະເສີດມັດທາຍທີ່ບັນທຶກເລື່ອງຄຳເທດສະໜານັ້ນ? ________

**2** ກ. ພະເຢຊູເທດສະໜາຢູ່ພູໝາກກອກເທດໃນວັນໃດ? ____________________________

ຂ. ຕອນໃດ? ____________________________________________________

ຄ. ກ່ອນນັ້ນພະອົງມາຈາກບ່ອນໃດ? ______________________________________

ງ. ພະອົງໂຕ້ຖຽງກັບຜູ້ນຳສາດສະໜາຢິວໃນບ່ອນໃດ? ___________________________

ຈ. ແລ້ວພະອົງປະນາມໃຜ? ______________________________________________

ສ. ໃນມັດທາຍ ບົດ 24 ພະເຢຊູກ່າວເຖິງສອງປະການໃດ? (ຕື່ມຄວາມທີ່ຂາດ)

1. ຄວາມທຸກ ____________________ ທີ່ຈະມາ.
2. ການສະເດັດມາຂອງ ____________________ .

**3** ໃນມັດທາຍ ບົດທີ 25 ພະອົງກ່າວຄຳອຸປະມາສາມປະການ. ປະການທີສອງເລື່ອງຫຍັງ? ______________________________ເຫັນຈາກຂໍ້ໃດໄປເຖິງຂໍ້ໃດ? ____________

**4** ໃຫ້ທ່ານອ່ານ ມທ 25:14-30 ແລ້ວໃຊ້ວິທີສັງເກດຕອບຄຳຕໍ່ໄປນີ້.

ກ. ມີຂ້ອຍໃຊ້ຈັກຄົນ? ______________________________

ຂ. ຄົນທຳອິດຮັບຈັກຫຼຽນ? ______________________________

ຄ. ເພິ່ນໄດ້ກຳໄລອີກຈັກຫຼຽນ? ______________________________

ງ. ເພິ່ນໃຫ້ຄົນທີສອງຈັກຫຼຽນ? ______________________________

ຈ. ເພິ່ນໄດ້ກຳໄລເທົ່າໃດ? ______________________________

ສ. ຄົນທີສາມໄດ້ຈັກຫຼຽນ? ______________________________

ຊ. ເພິ່ນເອົາຫຼຽນນັ້ນໄປເຮັດຫຍັງ? ______________________________

**5** ໃນພະຄຳພີຄຳວ່າ "ຕາລັນຕົນ" ອ້າງເຖິງຫຼຽນທີ່ມີລາຄາຕາມນ້ຳໜັກ. ຄົນລາວເຄີຍຊັ່ງເງິນ ແລະຄຳຕາມມາດຕະຖານ ວ່າເປັນບາດແລະສະຫຼຶງ. ຄົນຢິວເຄີຍໃຊ້ໝວດຕາລັນຕົນເພື່ອ ຫຍັງ? (ເລືອກ)

ກ. ເງິນ ແລະ ຄຳ ຂ. ເຂົ້າ ແລະ ສາລີ ຄ. ໄມ້ ແລະ ຫຍ້າ

**6** ຄຳວ່າ "ຕາລັນຕົນ" ເປັນມາດຕະຖານທີ່ເຂົາໃຊ້ເພື່ອຫຍັງ? (ເລືອກ)

ກ. ວັດຄວາມຮູ້ ຂ. ວັດຄວາມສູງ ຄ. ວັດຄວາມຍາວ ງ. ຊັ່ງນ້ຳໜັກ

**7** ຄຳວ່າ "ຕາລັນຕົນ" ເປັນມາດຕະຖານໃຊ້ເພື່ອຫຍັງ? (ຕື່ມຄວາມທີ່ຂາດ)

____________________ ຂອງ ________________ ຫຼື ____________________ .

**8** ທີ່ນາຍນັ້ນເອົາຕາລັນຕົນໃຫ້ຄົນໃຊ້ຈຳນວນຕ່າງໆໝາຍຄວາມວ່າເພິ່ນເອົາຫຍັງໃຫ້? (ເລືອກ)

ກ. ດິນຈີ່ ຂ. ເງິນ ຄ. ເຂົ້າ

**9** ກ. ທີ່ຈິງເງິນຕາລັນຕົນເຫຼົ່ານັ້ນເປັນຂອງໃຜ? (ເລືອກ)

_____ ຂ້ອຍໃຊ້ຄົນທຳອິດ _____ ຂ້ອຍໃຊຄົນທີສອງ _____ ນາຍ

ຂ. ໃຫ້ອ່ານ ມທ 25:27 ເຖິງວ່ານາຍນັ້ນຝາກເງິນໄວ້ໃຫ້ຂ້ອຍໃຊ້ຊົ່ວຄາວກໍຕາມ ແຕ່ຜູ້ໃດເປັນເຈົ້າຂອງ? ______________________________

ຄ. ຄືວ່ານາຍນັ້ນເຮັດຢ່າງໃດກັບເງິນຕາລັນຕົນ? (ເລືອກ)

_____ ໃຫ້ເປັນຂອງຂວັນ _____ ຝາກໄວ້ໃຫ້ເຂົາໃຊ້ _____ ຂາຍໃຫ້ເຂົາ

**10** ເຫັນວ່ານາຍນັ້ນປຽບທຽບພະເຈົ້າ, ຂ້ອຍໃຊ້ປຽບທຽບພວກເຮົາແລະເງິນຕາລັນຕົນປຽບທຽບ ຂອງປະທານທີ່ພະ ເຈົ້າຝາກໄວ້ໃຫ້ໃຜໃຊ້? ________________________________

**11** ນາຍເອົາເງິນຕາລັນຕົນຝາກໄວ້ໃຫ້ຄົນໃຊ້ເພື່ອຫຍັງ? (ເລືອກ)

ກ. ເພື່ອຈະໃຫ້ຄົນໃຊ້ເອງໄດ້ກຳໄລ ຂ. ເຊື່ອງໄວ້ໃນບ່ອນທີ່ປອດໄພ

ຄ. ໃຊ້ໃຫ້ນາຍນັ້ນໄດ້ກຳໄລ

**12** ກ. ເງິນຕາລັນຕົນປຽບທຽບກັບສິ່ງທີ່ໃຜຝາກໄວ້ໃຫ້ເຮົາໃຊ້? ______________________

ຂ. ເຮົາຄວນໃຊ້ເພື່ອໃຜ? ______________________________________________

**13** ຄວາມໝາຍຂອງຄຳວ່າ "ເງິນຕາລັນຕົນ" ມີຢູ່ສອງແງ່. (ຕື່ມຄວາມຂາດ)

ກ. ສິ່ງທີ່ ________________________ ຝາກໄວ້ໃຫ້ເຮົາ.

ຂ. ສິ່ງທີ່ເຮົາຈະໃຊ້ເພື່ອ ________________________ .

**14** ຄຳອຸປະມານີ້ ອ້າງເຖິງສິ່ງທີ່ພະເຈົ້າ _________ ໄວ້ໃຫ້ເຮົາຈິ່ງຈະໃຫ້ເຮົາ _____________ ເພື່ອ ___________________ . (ຕື່ມ)

**15** ມີບາງປະການທີ່ມີຢູ່ທຸກຄົນ. ໃນແຕ່ລະຂໍ້ຕໍ່ໄປນີ້ໃຫ້ທ່ານໝາຍ √ ໄວ້ໃນປະການໃດທີ່ເຮົາມີຢູ່ ເກືອບທຸກຄົນ.

ກ. ______ ສິ່ງຂອງສ່ວນຕົວ. ຂ. ______ ເວລາຫວ່າງ.

ຄ. ______ ຄວາມສາມາດຕ່າງ ໆ ງ. ______ ຕຳແໜ່ງສູງ

ຈ. ______ ຄວາມເປັນມິດກັນ. ສ. ______ ຄວາມຊຳນານ.

ຊ. ______ ຄວາມຮູ້. ຍ. ______ ສຸກຂະພາບ.

**16** ໃນບ່ອນຫວ່າງຕໍ່ໄປນີ້ ໃຫ້ທ່ານຈົດຂອງປະທານຢ່າງນ້ອຍ 4 ປະການທີ່ເຮົາມີທຸກຄົນ.

________________________________ ________________________________

________________________________ ________________________________

**17** "ເງິນຕາລັນຕົນ" ໃນຄຳອຸປະມານັ້ນປຽບທຽບຫຍັງ? (ຕື່ມຄວາມ)

ສິ່ງທີ່ _______________ ຝາກໄວ້ໃຫ້ ____________ ຈິ່ງຈະໃຊ້ເພື່ອ ___________

*ພວກເຮົາທຸກຄົນໄດ້ຮັບຂອງປະທານ ແລະພອນສະຫວັນຈາກພະເຈົ້າຫຼາຍຢ່າງມາ. ຕໍ່ໄປໃນບົດນີ້ ເຮົາຈະຮັບພິຈາລະນາເລື່ອງທີ່ຈະໃຊ້ຂອງປະທານເຫຼົ່ານັ້ນເພື່ອຖະຫວາຍກຽດໃຫ້ພະເຈົ້າ.*

| ໃຫ້ທ່ານເອົາເຈ້ຍເສດຈົດຂອງປະທານຕ່າງໆ ທີ່ພະເຈົ້າປະທານໃຫ້ທ່ານເອງ. |
|---|

**18** ກ. ໃຫ້ທ່ານອ່ານ 1 ເປໂຕ 4:10. ພາຍໃນພວກຄຼິດສະຕຽນມີຈັກຄົນທີ່ໄດ້ຮັບສິ່ງທີ່ພະເຈົ້າປະທານໃຫ້? ______________________________

ຂ. ບໍ່ແມ່ນວ່າຄຼິດສະຕຽນທຸກໆ ຄົນຈະຮັບຂອງປະທານຢ່າງດຽວກັນໝົດ. ເບິ່ງໃນຄຳອຸປະມານັ້ນຂ້ອຍໃຊ້ 3 ຄົນບໍ່ໄດ້ ຮັບຈຳນວນດຽວກັນແຕ່ທຸກຄົນໄດ້ຮັບຢ່າງໜຶ່ງຢ່າງໃດ. ຖ້າຄຼິດສະຕຽນຄົນໃດຈະປະຕິເສດວ່າບໍ່ມີຂອງ ປະທານຈັກປະການຈະຖືກບໍ່? ______________

ຄ. ໃຫ້ອ່ານ ຢາໂກໂບ 1:17. ຂອງປະທານອັນດີທຸກຢ່າງລົງມາຈາກໃສ? ______________

______________________________________________

ງ. ດັ່ງນັ້ນ ຂອງປະທານທີ່ຄຼິດສະຕຽນເຮົາທຸກຄົນມີແລ້ວນັ້ນ ມາຈາກໃສ? ______________

ຈ. ໃຫ້ອ່ານ 1 ໂກລິນໂທ 4:7. ສິ່ງທີ່ເຮົາມີນັ້ນມາແຕ່ໃສ? (ເລືອກ)

______ ເຮົາເຮັດເອົາເອງ

______ ເຮົາຮຽນມາໃນໂຮງຮຽນ

______ເຮົາຮັບມາຈາກພະເຈົ້າ.

ສ. ຄວາມສາມາດຂອງເຮົາມີຢູ່ ແມ່ນໃຜທີ່ຝາກໄວ້ໃຫ້ເຮົາ? ________________________

**19** ເລື່ອງຄວາມສາມາດຂອງເຮົາກໍບໍ່ໜ້າຈະອວດຕົວແຕ່ເປັນການເໝາະສົມທີ່ເຮົາຈະຮັບຮູ້ຄວາມສາມາດມີຢູ່ເທົ່າທີ່ພະ ເຈົ້າປະທານໃຫ້ ບໍ່ແມ່ນເພື່ອກຽດຕິຍົດຂອງເຮົາເອງແຕ່ເພື່ອຈະຖະຫວາຍກຽດໃຫ້ພະເຈົ້າ. ໃນລາຍຊື່ຕໍ່ ໄປນີ້ມີຄວາມສາມາດຕ່າງໆ ທີ່ມີແຕ່ບາງຄົນ. ໃຫ້ທ່ານອ່ານແລ້ວຂີດ √ ໝາຍຂອງປະທານຕ່າງໆ ຂອງທ່ານຜູ້ຮຽນ

ກ. _____ ຊ່າງໄມ້.
ຂ. _____ ຊ່າງໄຟຟ້າ.
ຄ. _____ ຊ່າງທາສີ.
ງ. _____ ຄົວກິນ.
ຈ. _____ ຮ້ອງເພງ.
ສ. _____ ເທດສະໜາ.
ຊ. _____ ການສອນ.
ຍ. _____ ການປ່າວປະກາດ.
ດ. _____ ສິນລະປະ
ຕ. _____ ແຕ່ງເລື່ອງ.



ຖ. _____ ນັກບັນຊີ.
ທ. _____ ຮັກສາເດັກ.
ນ. _____ ການຄ້າ.
ບ. _____ ຮັບແຂກ.
ປ. _____ ດູແລຄົນເຖົ້າ.
ຜ. _____ ຜູ້ສ້ອມແປງ.
ຝ. _____ ເຮັດຄວາມສະອາດ.
(ຈາກນີ້ໄປເອົາແຕ່ທ່ານຈະຄິດອອກ)
ພ. _____ ____________________
ຟ. _____ ____________________

**20** ຄວາມສາມາດທຸກປະການໃນຂໍ້ 19 ນັ້ນມີສ່ວນໃນຂອງປະທານທີ່ພະເຈົ້າຝາກໄວ້ໃຫ້ເຮົາ.

ກ. ແມ່ນຄຳໃດທີ່ອ້າງເຖິງສິ່ງຂອງຫຼືຄວາມສາມາດທີ່ພະເຈົ້າຝາກໄວ້ໃຫ້ເຮົາໃຊ້ເພື່ອພະອົງ?

______________________________________________

ຂ. ເຮົາຄວນທີ່ຈະໃຊ້ຂອງປະທານເຫຼົ່ານັ້ນເພື່ອຖະຫວາຍກຽດໃຫ້ໃຜ? ______________

**21** ສິ່ງຂອງທີ່ເຮົາມີກໍເປັນຂອງປະທານທີ່ມາຈາກພະເຈົ້າຍິ່ງໄປກວ່ານັ້ນ ເງິນທີ່ເຮົາຫາມາໄດ້ກໍເປັນຂອງປະທານອີກດ້ວຍ ເປັນທີ່ _________ ຝາກໄວ້ໃຫ້ _________ . (ຕື່ມຄວາມທີ່ຂາດ)

**22** ເຫັນວ່າທຸກສິ່ງທີ່ເຮົາມີເປັນຂອງປະທານຈາກພະເຈົ້າ. ຖ້າເປັນຢ່າງນັ້ນເຮົາຄວນທີ່ຈະຖະຫວາຍຊັບຫຼາຍປານໃດຄືນໃຫ້ ພະເຈົ້າ. ໃນສະໄໝພະຄຳພີເດີມມີມາດຕະຖານເລື່ອງນີ້. ໃຫ້ອ່ານຈາກ ພະບັນຍັດສອງ 12:6 ແລະ 26:12 ຊາດຢິວ ເຄີຍຖະຫວາຍຈັກສ່ວນໃຫ້ພະເຈົ້າ? (ເລືອກ)

______ ສ່ວນສາມ ______ ສ່ວນຫ້າ ______ ສ່ວນສິບ

**23** ຊາດຢິວໃນສະໄໝພະຄຳພີເດີມ ເຄີຍຖະຫວາຍ 1/10 ໃຫ້ພະເຈົ້າ ແຕ່ທີ່ຈິງພວກເຮົາໃນສະໄໝນີ້ໄດ້ຮັບພະພອນຈາກ ພະເຈົ້າຫຼາຍກ່ວາເຂົາອີກ. ດັ່ງນັ້ນພວກເຮົາຄວນຈະຖະຫວາຍຫຼາຍປານໃດໃຫ້ພະເຈົ້າ? (ເລືອກ)

ກ. ໜ້ອຍກວ່າຄົນຢິວໃນພະຄຳພີເດີມ.

ຂ. ຫຼາຍກ່ວາຄົນຢິວໃນພະຄຳພີເດີມ.

ຄ. ເທົ່າກັນກັບຄົນຢິວໃນພະຄຳພີເດີມ.

**24** ໃຫ້ອ່ານ 1 ໂກລິນໂທ 16:2. ອາຈານໂປໂລບໍ່ໄດ້ບົ່ງຈຳນວນເງິນທີ່ຈະຖະຫວາຍແຕ່ບອກໃຫ້ຄິດສະເລ່ຍໄວ້. ສະ ແດງວ່າອາທິດໃດທີ່ເຮົາໄດ້ຫຼາຍເຮົາຈະຖະຫວາຍຫຼາຍແລະໃນອາທິດໃດທີ່ລາຍໄດ້ໜ້ອຍລົງເຮົາຈະຖະ ຫວາຍຢ່າງໃດໃນອາທິດນັ້ນ? ______________________

*ໃຫ້ທ່ານຢຸດຮຽນຊົ່ວຄາວນີ້ ເພື່ອວັດຜົນໃນເລື່ອງທີ່ເຮົາຮຽນມາແລ້ວ*

* *ທ່ານຮັບຮູ້ແລ້ວວ່າ ຄວາມສາມາດທຸກປະການທີ່ທ່ານມີກໍມາຈາກພະເຈົ້າ. ຄວາມສາມາດເຫຼົ່ານັ້ນທ່ານໃຊ້ເພື່ອຖະຫວາຍກຽດໃຫ້ພະເຈົ້າບໍ່?*
* *ຊັບສິ່ງຂອງແລະເງິນລາຍໄດ້ກໍໃຊ້ເພື່ອພະເຈົ້າບໍ່?*



**25** ກ. ເງິນຕາລັນຕົນໃນຄຳອຸປະມານີ້ປຽບທຽບຫຍັງ? ______________________________

______________________________________________________________

ຂ. ໃຫ້ທ່ານຈົດຂອງປະທານທີ່ເຮົາມີທຸກຄົນ 4 ປະການ:

______________________________ ______________________________

______________________________ ______________________________

**26** ຫຼັກຄຳສອນສຳຄັນທີ່ສຸດໃນຄຳອຸປະມານີ້ຄືຫຼັກໃດ? (ເລືອກ ຂໍ້ດຽວ)

ກ. ນາຍນັ້ນເປັນຄົນໃຈແຂງ.

ຂ. ຂ້ອຍໃຊ້ທີສາມເຮັດບໍ່ດີ.

ຄ. ນາຍຕ້ອງການໃຫ້ເຂົາໃຊ້ເງິນເພື່ອຈະໄດ້ກຳໄລ.

**27** ຖ້າເຮົາຈະຕີຄວາມໝາຍໃຫ້ຖືກກັບຫຼັກສຳຄັນນັ້ນເຫັນວ່າພະເຈົ້າຢາກໃຫ້ຄຣິດສະຕຽນເຮົາໃຊ້ຊັບສິ່ງຂອງແລະຄວາມສາ ມາດຂອງເຮົາເພື່ອຖະຫວາຍກຽດໃຫ້ພະອົງ. ດັ່ງນັ້ນເຮົາຕ້ອງ:

* ດຳເນີນຊີວິດຕາມນ້ຳພະໄທ.
* ເຮັດຕາມແຜນການຂອງພະເຈົ້າໃຫ້ສຳເລັດ.
* ຖະຫວາຍກຽດຕິຍົດໃຫ້ພະອົງ.

ກ. ເງິນຕາລັນຕົນນັ້ນປຽບທຽບຫຍັງ? ________________________________________

________________________________________________________________

ຂ. ທຸກຄົນມີຂອງປະທານບາງຢ່າງ. ໃຫ້ທ່ານຈົດ 4 ປະການທີ່ຄຣິດສະຕຽນທົ່ວໄປມີ.

________________________________________________________________

________________________________________________________________

________________________________________________________________

________________________________________________________________

ຄ. ຕາມຄຳສອນໃນຄຳອຸປະມານັ້ນ ພະເຈົ້າຈະໃຫ້ຄຣິດສະຕຽນເຮົາໃຊ້ຂອງປະທານເຫຼົ່ານັ້ນເພື່ອຫຍັງ? ________________________________________________

**28** ກ. ໃຫ້ອ່ານ ມທ 25:21 ນາຍຕອບຂ້ອຍໃຊ້ຄົນທຳອິດວ່າຢ່າງໃດ? (ຕື່ມຄວາມ) "ດີແລ້ວ ຂ້ອຍໃຊ້ຜູ້ດີແລະ ______________ ເອີຍ ເຈົ້າເປັນຜູ້ ____________ ໃນຂອງເລັກນ້ອຍ..."

ຂ. ໃນ ມທ 25:23 ນາຍຕອບຂ້ອຍໃຊ້ຄົນທີສອງວ່າຢ່າງໃດ? (ຕື່ມຄວາມ) "ດີແລ້ວ ຂ້ອຍໃຊ້ຜູ້ດີແລະ ______________ ເອີຍ ເຈົ້າເປັນຜູ້ _______________ ໃນຂອງເລັກນ້ອຍ..."

**29** ຕາມຄວາມຂອງນາຍນັ້ນ ແມ່ນຄົນຢ່າງໃດຈະຮັບລາງວັນ? (ເລືອກ)

ກ. ຄົນທີ່ມີຄວາມສາມາດຫຼາຍກວ່າໝູ່ ຂ. ຄົນທີ່ໄດ້ຮັບຜົນສຳເລັດ.

ຄ. ຄົນທີ່ຊື່ສັດ.

**30** ຄຳອຸປະມານັ້ນສອນວ່າຄົນທີ່ ______________ ເພື່ອພະເຢຊູຈະຮັບລາງວັນ. (ຕື່ມຄວາມ)

**31** ໃຫ້ທ່ານກັບໄປເບິ່ງຮູບໜ້າປົກບົດນີ້ ໃນໜ້າປົກນັ້ນມີຮູບ 4 ແຜ່ນແລະໃນແຕ່ລະຮູບນັ້ນເຫັນຄົນທີ່ເອົາຊື່ວ່າເປັນຄຣິດສະ ຕຽນປາກົດເຫັນແຈ້ງວ່າຜູ້ໜຶ່ງບໍ່ເຊື່ອໃນພະເຢຊູແທ້ຈິງ.

ກ. ແມ່ນຄົນໃດທີ່ບໍ່ເຊື່ອຢ່າງຈິງໃຈ? ________________________________________

ຂ. ຄົນໃດເຊື່ອຢູ່ ແຕ່ບໍ່ສັດຊື່ໃນວຽກງານ? ___________________________________

ຄ. ຄົນໃດແດ່ທີ່ສັດຊື່? _________________________________________________

**32** ແມ່ນຄົນໃດທີ່ຈະຮັບລາງວັນ? ____________________________________________

**33** ເປັນຫຍັງທ່ານແກ້ວຈະບໍ່ຮັບລາງວັນດີ, ເຫັນວ່າເພິ່ນໄດ້ຜົນຫຼາຍກວ່າຖາວອນແລະເພິ່ນກໍເທດສະໜາໄດ້ເກັ່ງ ກວ່າສຸກແກ້ວຂາດລັກສະນະໃດ? __________ ຄຳອຸປະມານີ້ສອນວ່າຈະມີລາງວັນສະເພາະເພື່ອຄົນທີ່ຮັບໃຊ້ພະເຈົ້າໂດຍມີຄວາມ ___________. (ຕື່ມຄວາມ ທີ່ຂາດ)

**34** ກ. ໃນສະໄໝພະເຢຊູ "ຕາລັນຕົນ" ຄືຫຍັງ? ________________________________

ຂ. ໃນຄຳອຸປະມານີ້ ເງິນຕາລັນຕົນປຽບທຽບຫຍັງ? __________________________

ຄ. ຖ້າເຮົາມີຂອງປະທານຈາກພະເຈົ້າເຮົາຄວນໃຊ້ເພື່ອໃຜ? _____________________

**35** ຂ້ອຍໃຊ້ສອງຄົນຮັບລາງວັນອີກຄົນໜຶ່ງຖືກໂທດ.

ກ. ເພິ່ນເຮັດໃຫ້ເງິນເສຍຫາຍບໍ່ ຈິ່ງຖືກໂທດ? ________________________________

ຂ. ແມ່ນແຕ່ເພິ່ນບໍ່ຍອມເອົາເງິນຄືນໃຫ້ນາຍບໍ່? ______________________________

ຄ. ຕາມ ມທ 25:25 ເພິ່ນເອົາຄືນໃຫ້ນາຍພຽງໃດ? (ເລືອກ)

_____ ພໍດີເງິນຕົ້ນທຶນ

_____ ເງິນຕົ້ນທຶນຮ່ວມກັບລາຍໄດ້

_____ ເງິນຕົ້ນທຶນລົບອອກສ່ວນທີ່ເສຍໄປ.

**36** ເປັນຫຍັງຂ້ອຍໃຊ້ທີ 3 ນັ້ນຖືກຕັດສິນ? (ເລືອກ)

ກ. ເພາະເພິ່ນລົງທຶນບໍ່ຖືກຈິ່ງເສຍຫາຍ ຂ. ເພາະເພິ່ນໃຊ້ເງິນນັ້ນຢ່າງບໍ່ສັດຊື່

ຄ. ເພາະເພິ່ນບໍ່ໃຊ້ເລີຍ

**37** ກ. ຂ້ອຍໃຊ້ທີໜຶ່ງກັບທີສອງໄດ້ຮັບລາງວັນ ເພາະເຂົາເຮັດຢ່າງ ___________. (ຕື່ມຄວາມ)

ຂ. ຄົນທີສາມຖືກການພິພາກສາເພາະເພິ່ນ _____________________________ ເລີຍ.

**38** ໃຫ້ທ່ານຮັບພິຈາລະນາຂໍ້ກ່ອນ ແລະຂໍ້ທີຫຼັງ. (ຕື່ມຄວາມທີ່ຂາດ)

ກ.ໃນຄຳອຸປະມາເລື່ອງສາວປອດສິບຄົນ ຄົນໂງ່ 5 ຄົນເຂົ້າຮ່ວມກັບຜູ້ອື່ນບໍ່ໄດ້ເພາະເຂົາ ___________ ມີນ້ຳມັນ.

ຂ. ຕໍ່ມາໃນຄຳອຸປະມາເລື່ອງແກະກັບແບ້.

ພະເຢຊູປ້ອຍເວນຄົນທີ່ຢູ່ເບື້ອງຊ້າຍເພາະເຂົາ _______________ ຊ່ອຍຄົນທຸກຍາກ.

ຄ. ໃນຄຳອຸປະມາເລື່ອງເງິນຕາລັນຕົນ ຂ້ອຍໃຊ້ຄົນທີ່ສາມຖືກຕັດສິນເພາະ

ເພິ່ນ ________________ ເອົາເງິນຂອງນາຍໄປໃຊ້.

**39** ໃຫ້ທ່ານເປີດອ່ານ ຢາໂກໂບ 4:17 ແລ້ວຕື່ມຄວາມທີ່ຂາດຕໍ່ໄປນີ້: "ເຫດສັນນັ້ນຜູ້ໃດຮູ້ວ່າອັນໃດເປັນການດີ ແລະ _________________ ເຮັດຜູ້ນັ້ນຈິ່ງມີ _________________ ."

| ໃຫ້ທ່ານເອົາສໍສີຂຽວຂີດກ້ອງ ຢາໂກໂບ 4:17 ທັງຂໍ້ |
|---|

**40** ແມ່ນບົດແລະຂໍ້ໃດໃນພະຄຳພີ ທີ່ສອນວ່າ ຜູ້ທີ່ຮູ້ການດີແຕ່ບໍ່ເຮັດຕາມຄົນນັ້ນຈິ່ງມີບາບ?

____________________________________________________________

**41** ຂໍ້ພະຄຳພີນັ້ນ ເຂົ້າກັນກັບ ມັດທາຍ ບົດທີ 25 ວ່າ ບໍ່ແມ່ນພຽງແຕ່ເຮົາຄວນຫຼີກເວັ້ນຈາກຄວາມບໍ່ດີຢ່າງດຽວ.ເຮົາຕ້ອງ ເຮັດຄວາມດີດ້ວຍ! ໃຫ້ທ່ານອ່ານຄຳຕໍ່ໄປນີ້ແລະຂີດຂ້າອອກຄຳໃດທີ່ເຂົ້າກັບຄວາມຄິດຂອງຂ້ອຍ ໃຊ້ຄົນທີສາມ
(ທັງສາວປອດຄົນໂງ່ ແລະຄົນທີ່ຢູ່ເບື້ອງຊ້າຍໃນການພິພາກສາດ້ວຍ.)

ກ. "ຂ້ອຍບໍ່ເປັນຄົນບາບ ເພາະບໍ່ເຄີຍທຳລາຍຜູ້ອື່ນຈັກເທື່ອ."
ຂ. "ນິໄສບໍ່ດີນັ້ນ ຂ້ອຍປະໝົດແລ້ວຄິດວ່າພະເຈົ້າຈະພໍໃຈຂ້ອຍ."
ຄ. "ຂອບໃຈທີ່ພະເຍຊູຍົກຜິດບາບແລ້ວທັງເປີດໃຫ້ມີໂອກາດປ່າວປະກາດພະທຳດ້ວຍ."
ງ. "ຄາວໜຶ່ງນັ້ນ ຂ້ອຍຮັບໜ້າທີ່ສອນພະຄຳພີໃຫ້ເດັກນ້ອຍ ແລະມີຄວາມສາມາດສອນໄດ້ດີດ້ວຍ ແຕ່ຕໍ່ມາກໍເລີກ ແລ້ວ ຂໍ້ສຳຄັນແມ່ນແຕ່ຂ້ອຍບໍ່ໄດ້ຕົກໃນບາບອີກ."
ຈ. "ຂ້ອຍບໍ່ມີຄວາມສາມາດຫຼາຍ ແຕ່ກໍຍັງຍິນດີທີ່ຈະຊ່ວຍໃນຄຼິດສະຕະຈັກເທົ່າທີ່ຈະໄດ້."
ສ. "ເບິ່ງຄືຄົນໃນບ້ານນີ້ບໍ່ສົນໃຈຮັບຟັງຂ່າວປະເສີດຂອງພະເຈົ້າທີ່ຈະເປັນພະຍານຕໍ່ໄປບໍ່ມີຜົນປະໂຫຍດ."

**42** ກ. ເປັນຫຍັງນາຍຕັດສິນຂ້ອຍໃຊ້ຄົນທີສາມ? ________________________________
ຂ. ບົດຮຽນໃນຄຳອຸປະມານັ້ນຄື ພະເຈົ້າຈະໃຫ້ເຮົາໃຊ້ຂອງປະທານເພື່ອໃຜ? __________

**43** ໃຫ້ອ່ານ ມັດທາຍ 25:21 ອີກເທື່ອໜຶ່ງ.
ກ. ພະເຍຊູຍ້ອງຍໍຂ້ອຍໃຊ້ຄົນທຳອິດໂດຍເວົ້າຄວາມດັ່ງຕໍ່ໄປນີ້: (ຕື່ມຄວາມຂາດ)
"ດີແລ້ວ ຂ້ອຍໃຊ້ຜູ້ດີ ແລະ __________ ເອີຍ ເຈົ້າເປັນຜູ້ ________ ໃນຂອງເລັກນ້ອຍ ເຮົາຈະຕັ້ງໃຫ້ເຈົ້າເປັນຜູ້ ____________ ຂອງຫຼາຍຢ່າງ ຈົ່ງເຂົ້າຮ່ວມຄວາມ ___________ ກັບນາຍເຈົ້າເທີນ."
ຂ. ອີກຂໍ້ໃດ ເວົ້າຄວາມດຽວກັນ? ____________________________________

**44** ລາງວັນທີ່ເຮົາຈະຮັບເອົານັ້ນມີຢູ່ 2 ແງ່ຄື:
ກ. ນາຍຈະຕັ້ງໃຫ້ເບິ່ງແຍງຫຍັງ? ____________________________________
ຂ. ຈະເຂົ້າຮ່ວມຫຍັງ? ____________________________________________

**45** ກ. ເປັນຫຍັງຂ້ອຍໃຊ້ທີສາມຈຶ່ງຖືກລົງໂທດ? ____________________________
ຂ. ແຕ່ຂ້ອຍໃຊ້ຢ່າງສັດຊື່ຈະຮັບຫຍັງ?___________________________________

* *ພະເຈົ້າປະທານໃຫ້ເຮົາເພື່ອຈະໃຫ້ເຮົາຖະຫວາຍພະກຽດແກ່ພະອົງ.*
* *ຖ້າເຮົາບໍ່ໃຊ້ ເຮົາອາດຈະຖືກລົງໂທດຢ່າງຂ້ອຍໃຊ້ຄົນທີສາມນັ້ນ*
* *ຖ້າເຮົາໃຊ້ ພະເຈົ້າອາດຈະເປີດໂອກາດກວ້າງກວ່າເກົ່າອີກແລະເຮົາຈະເຂົ້າຮ່ວມຄວາມຍິນດີກັບພະອົງ.*

*ຢ່າລືມບົດເສັງ!*

## ຄຳຕອບ:

**1** *ກ. ພູໝາກກອກເທດ. ຂ. ມທ ບົດ 24 ແລະ 25.*

**2** *ກ. ວັນອັງຄານ. ຂ. ຕອນແລງ ຄ. ພະວິຫານ (ກຸງເຢລູຊາເລັມ)*
*ງ. ພະວິຫານ. ຈ. ນັກທຳແລະຟາລິຊາຍ. ສ. 1. ລຳບາກ 2. ບຸດມະນຸດ*

**3** *ເລື່ອງເງິນຕາລັນຕົນ ຂໍ້ 14-30*

**4** *ກ. 3 ຄົນ ຂ. 5 ຄ. ອີກ 5 ງ. 2 ຈ. ອີກ 2 ສ. 1*
*ຊ. ເຊື່ອງໄວ້ໃຕ້ພື້ນດິນ*

**5** *ກ ຖືກ*

**6** *ງ ຖືກ*

**7** *ຊັ່ງນ້ຳໜັກ... ເງິນ... ຄຳ*

**8** *ຂ ຖືກ*

**9** *ກ. ນາຍ ຂ. ນາຍ ຄ. ຝາກໄວ້ໃຫ້ເຂົາໃຊ້*

**10** *ພວກເຮົາ*

**11** *ຄ ຖືກ*

**12** *ກ. ພະເຈົ້າ ຂ. ພະເຈົ້າ*

**13** *ກ. ພະເຈົ້າ ຂ. ພະເຈົ້າ*

**14** *ຝາກໄວ້... ໃຊ້... ພະເຈົ້າ*

**15** *ກ ຂ ຄ ຈ ສ ຊ ຍ ຖືກ*

**16** *(ໃຫ້ເບິ່ງໃນຄຳຕອບ 15 ຫຼືອາດຈະມີຢ່າງອື່ນອີກ)*

**17** *ພະເຈົ້າ... ເຮົາ... ພະເຈົ້າ*

**18** *ກ. ທຸກຄົນ ຂ. ບໍ່ຖືກ ຄ. ຈາກພະບິດາແຫ່ງບັນດາດວງສະຫວ່າງ. (ຄືພະເຈົ້າ)*
*ງ. ພະເຈົ້າ ຈ. ເຮົາຮັບມາຈາກພະເຈົ້າ ສ. ພະເຈົ້າ*

**19** *(ບໍ່ມີຄຳຕອບຕາຍຕົວ ໃຫ້ແລກປ່ຽນຄຳຄິດເຫັນໃນປະຊຸມ)*

**20** *ກ. ຂອງປະທານ ຂ. ພະເຈົ້າ*

**21** *ພະເຈົ້າ... ເຮົາ*

**22** *ສ່ວນສິບ*

**23** *ຂ ຖືກ*

**24** *ຖະຫວາຍໜ້ອຍລົງ.*

**25** *ກ. ສິ່ງຂອງ ຫຼືຄວາມສາມາດທີ່ພະເຈົ້າຝາກມາໃຫ້ເຮົາໃຊ້ເພື່ອພະອົງ. (ຄຳຄ້າຍຄືກໍໄດ້)*
*ຂ. (ໃຫ້ເບິ່ງໃນຄຳຕອບ 15 ຫຼືອາດຈະມີຢ່າງອື່ນໆ ອີກ)*

**26** *ຄ ຖືກ*

**27** *ກ. ສິ່ງຂອງ ຫຼືຄວາມສາມາດທີ່ພະເຈົ້າປະທານມາໃຫ້ເຮົາໃຊ້ເພື່ອພະອົງ.*
*ຂ. (ໃຫ້ເບິ່ງຄຳຕອບ 15) ຄ. ເພື່ອພະເຈົ້າ*

**ຄຳຕອບ (ຕໍ່):**

**28** *ກ. ສັດຊື່... ສັດຊື່ ຂ. ສັດຊື່... ສັດຊື່*

**29** *ຄ ຖືກ*

**30** *ສັດຊື່*

**31** *ກ. ຄານ ຂ. ແກ້ວ ຄ. ຖາວອນ ແລະ ສຸກ*

**32** *ຖາວອນກັບສຸກ*

**33** *ສັດຊື່ ສັດຊື່*

**34** *ກ. ມາດຕະຖານຊັ່ງນໍ້າໜັກ ຂ. ຂອງປະທານທີ່ພະເຈົາໃຫ້ ຄ. ພະເຈົາ*

**35** *ກ. ບໍ່ ຂ. ບໍ່ແມ່ນ ຄ. ພໍດີເງິນຕົນທຶນ*

**36** *ຄ ຖືກ*

**37** *ກ. ສັດຊື່ ຂ. ບໍ່ໃຊ້ເງິນນັ້ນ*

**38** *ກ. ບໍ່ ຂ. ບໍ່ ຄ. ບໍ່*

**39** *ບໍ່... ບາບ*

**40** *ຢາໂກໂບ 4:17*

**41** *ຂີດຂ້າອອກ ກ ຂ ງ ແລະ ສ*

**42** *ກ. ເພິ່ນບໍ່ໄດ້ເຮັດຫຍັງເລີຍ ຂ. ເພື່ອພະເຈົາ*

**43** *ກ. ສັດຊື່... ສັດຊື່... ເບິ່ງແຍງ... ຍິນດີ ຂ. ຂໍ້ 23*

**44** *ກ. ຂອງຫຼາຍຢ່າງ ຂ. ຄວາມຍິນດີກັບນາຍ*

**45** *ກ. ເພາະເພິ່ນບໍ່ເຮັດຫຍັງເລີຍ ຂ. ຮັບລາງວັນ*